ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 09 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 17 FEB 2022

# ຂໍ້ຕົກລົງ
# ວ່າດ້ວຍຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 24/ຄຄຊ, ລົງວັນທີ 16 ກໍລະກົດ 2021.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງ ແລະ ຈັດຕັ້ງປະຕິບັດ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແນ່ໃສ່ຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ປະສິດທິພາບສູງ.

**ມາດຕາ 2 ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແມ່ນ ການຝຶກອົບຮົມ ກ່ຽວກັບປະເພດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ຫຼັກການ**

ການສ້າງ ແລະ ຈັດຕັ້ງປະຕິບັດ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

3. ປະສານສົມທົບກັນລະຫວ່າງ ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

4. ຮັບປະກັນຄວາມ ໂປ່ງໃສ ແລະ ຍຸຕິທຳ ໃນການ ສອບເສັງ ແລະ ໃຫ້ຄະແນນ;

5. ຮັກສາຄວາມລັບຂອງບົດສອບເສັງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ.

## ໝວດທີ 2
## ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ

**ມາດຕາ 5 ປະເພດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະກອບມີປະເພດ ດັ່ງນີ້:

1. ນາຍໜ້າຊື້ຂາຍຫຼັກຊັບ ແລະ ຜູ້ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ (Securities Broker/Dealer);

2. ທີ່ປຶກສາທາງດ້ານການເງິນ (Financial Advisor);

3. ທີ່ປຶກສາທາງດ້ານການລົງທຶນ (Investment Advisor);

4. ຜູ້ວິເຄາະຫຼັກຊັບ (Securities Analyst);

5. ຜູ້ບໍລິຫານກອງທຶນເພື່ອການລົງທຶນ (Fund Manager);

6. ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບປະເພດອື່ນ ຕາມການກຳນົດ ຫຼື ການຮັບຮອງ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ຜູ້ທີ່ໄດ້ຜ່ານການຮຽນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈາກຕ່າງປະເທດ ທີ່ຕ້ອງການເຂົ້າມາເຄື່ອນໄຫວເປັນນັກວິຊາຊີບທຸລະກິດຫຼັກຊັບຢູ່ ສປປ ລາວ ຕ້ອງໄດ້ເຂົ້າຮຽນພາກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ຕາມການກຳນົດຂອງຕະຫຼາດຫຼັກຊັບ ໃນແຕ່ລະໄລຍະ.

**ມາດຕາ 6 ຜູ້ສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຕະຫຼາດຫຼັກຊັບ ເປັນຜູ້ສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້. ກໍລະນີຈຳເປັນ ຕະຫຼາດຫຼັກຊັບ ສາມາດສົມທົບກັບ ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອສ້າງຫຼັກສູດດັ່ງກ່າວກໍໄດ້.

**ມາດຕາ 7 ເອກະສານປະກອບການຂໍຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຕະຫຼາດຫຼັກຊັບ ຕ້ອງປະກອບເອກະສານເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ໜັງສືສະເໜີຂໍຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ;

2. ໂຄງຮ່າງ, ລາຍວິຊາ ແລະ ພາກສ່ວນທີ່ຈະສອນແຕ່ລະວິຊາໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ;

3. ເອກະສານປະກອບໃນການສອນແຕ່ລະວິຊາ;

4. ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ການພິຈາລະນາຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ພາຍໃນເວລາ 15 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

**ມາດຕາ 9 ການຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ພາຍຫຼັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລ້ວ, ຕະຫຼາດຫຼັກຊັບ ຈຶ່ງສາມາດຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ໄດ້.

ຕະຫຼາດຫຼັກຊັບ ຕ້ອງຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງຕໍ່ປີ ກໍລະນີທີ່ບໍ່ສາມາດຈັດຝຶກອົບຮົມຫຼັກສູດດັ່ງກ່າວ ຕະຫຼາດຫຼັກຊັບ ຕ້ອງໄດ້ລາຍງານ ແລະ ອະທິບາຍຊີ້ແຈງເຫດຜົນຢ່າງເປັນລາຍລັກອັກສອນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 ການປັບປຸງ ຫຼື ປ່ຽນແປງຫຼັກສູດນັກວິຊາຊີບທຸລະກິດຫັກຊັບ**

ການປັບປຸງ ຫຼື ປ່ຽນແປງ ໂຄງຮ່າງ ແລະ ລາຍວິຊາຂອງ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ທຸກຄັ້ງຕ້ອງໄດ້ຂໍອະນຸຍາດຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາ ພາຍໃນເວລາ 7 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການສະເໜີ ເປັນຕົ້ນໄປ.

## ໝວດທີ 3
## ການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ

**ມາດຕາ 11 ຜູ້ເຂົ້າຮ່ວມຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຜູ້ເຂົ້າຮ່ວມຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະກອບມີ ດັ່ງນີ້:

1. ມວນຊົນທົ່ວໄປ ສາມາດເຂົ້າຮ່ວມຝຶກອົບຮົມໃນທຸກໆຫຼັກສູດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

2. ພະນັກງານຂອງ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຜູ້ທີ່ຈະສະເໜີຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

2.1 ປະເພດນາຍໜ້າຊື້ ຂາຍຫຼັກຊັບ ແລະ ຜູ້ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ ແລະ ປະເພດທີ່ປຶກສາທາງດ້ານການເງິນ ຕ້ອງຈົບປະລິນຍາຕີຂຶ້ນໄປ ສາຂາໃດໜຶ່ງ ເປັນຕົ້ນ ການເງິນ-ການທະນາຄານ, ການບັນຊີ, ບໍລິຫານທຸລະກິດ, ກົດໝາຍ ແລະ ສາຂາອື່ນຕາມການກຳນົດຂອງ ຕະຫຼາດຫຼັກຊັບລາວ;

2.2 ປະເພດທີ່ປຶກສາທາງດ້ານການລົງທຶນ ຕ້ອງສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້ ຂາຍຫຼັກຊັບ ແລະ ຜູ້ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ;

2.3 ປະເພດຜູ້ວິເຄາະຫຼັກຊັບ ຕ້ອງສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້ ຂາຍຫຼັກຊັບ ແລະ ຜູ້ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ ແລະ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະເພດທີ່ປຶກສາທາງດ້ານການລົງທຶນ;

2.4 ປະເພດຜູ້ບໍລິຫານກອງທຶນເພື່ອການລົງທຶນ ຕ້ອງສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ປະເພດຜູ້ວິເຄາະຫຼັກຊັບ.

**ມາດຕາ 12 ການເຂົ້າຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຜູ້ເຂົ້າຝຶກອົບຮົມໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕ້ອງໄດ້ເຂົ້າຮຽນໃນທຸກໆວິຊາໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນຫຼັກສູດ ແລະ ຕ້ອງລົງລາຍເຊັນໃນຕາຕະລາງຕິດຕາມການຂຶ້ນຫ້ອງຮຽນນໍາຜູ້ຕິດຕາມທຸກຄັ້ງ ກ່ອນທີ່ຈະເຂົ້າຮຽນ ແລະ ຫຼັງຈາກສໍາເລັດການຮຽນ ແລະ ຕ້ອງເຂົ້າຮຽນຢ່າງໜ້ອຍບໍ່ໃຫ້ຫຼຸດຕາມອັດຕາສ່ວນທີ່ໄດ້ກໍານົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້. ການຮຽນ-ການສອນ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບປະກອບມີ ແບບກັບທີ, ແບບອອນລາຍ ຫຼື ຮູບແບບອື່ນ ທີ່ເໝາະສົມ.

**ມາດຕາ 13 ເງື່ອນໄຂຂອງຜູ້ສອນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຜູ້ສອນໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຈົບການສຶກສາ ໃນລະດັບປະລິນຍາຕີຂຶ້ນໄປໃນ ສາຂາ ການເງິນ-ການທະນາຄານ, ການບັນຊີ, ບໍລິຫານທຸລະກິດ, ກົດໝາຍ ແລະ ສາຂາອື່ນ ທີ່ກ່ຽວຂ້ອງກັບການຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ;

2. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທາງດ້ານ ການເງິນ-ການທະນາຄານ, ການບັນຊີ, ບໍລິຫານທຸລະກິດ, ກົດໝາຍ ແລະ ສາຂາອື່ນ ທີ່ກ່ຽວຂ້ອງກັບວິຊາທີ່ກໍານົດໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 2 ປີ;

3. ເງື່ອນໄຂອື່ນ ຕາມການກໍານົດຂອງ ຕະຫຼາດຫຼັກຊັບ.

**ມາດຕາ 14 ຄ່າບໍລິການໃນການເຂົ້າຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຄ່າບໍລິການໃນການເຂົ້າຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແມ່ນໃຫ້ປະຕິບັດຕາມການກໍານົດຂອງ ຕະຫຼາດຫຼັກຊັບ ໃນແຕ່ລະໄລຍະ.

## ໝວດທີ 4
## ການສອບເສັງ ແລະ ການລາຍງານຜົນການຝຶກອົບຮົມ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ

**ມາດຕາ 15 ການສອບເສັງແຕ່ລະປະເພດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຜູ້ທີ່ຈະໄດ້ເຂົ້າສອບເສັງ ໃນແຕ່ລະຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ເຂົ້າຮຽນຢ່າງໜ້ອຍ ແປດສິບສ່ວນຮ້ອຍ (80%) ຂຶ້ນໄປ ຂອງຊົ່ວໂມງຮຽນທັງໝົດ ແລະ ແຕ່ລະຫຼັກສູດຕ້ອງສອບເສັງໃຫ້ໄດ້ຄະແນນ ຢ່າງໜ້ອຍ ເຈັດສິບສ່ວນຮ້ອຍ (70%) ຂຶ້ນໄປ ຂອງຄະແນນທັງໝົດ ຈຶ່ງຖືວ່າສອບເສັງຜ່ານຫຼັກສູດດັ່ງກ່າວ.

**ມາດຕາ 16 ການສອບເສັງຄືນ**

ຜູ້ເຂົ້າສອບເສັງ ໃນແຕ່ລະຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ທີ່ສອບເສັງບໍ່ໄດ້ຄະແນນຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ແມ່ນຕ້ອງໄດ້ສອບເສັງຄືນໃໝ່ ຕາມການກໍານົດຂອງ ຕະຫຼາດຫຼັກຊັບ. ກໍລະນີ ຜູ້ເຂົ້າສອບເສັງ ທີ່ສອບເສັງບໍ່ຜ່ານ ພາກການເງິນ ຫຼື ພາກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຜູ້ກ່ຽວຕ້ອງສອບເສັງຄືນສະເພາະພາກນັ້ນ.

**ມາດຕາ 17 ການປະກາດຜົນ ແລະ ການມອບໃບຢັ້ງຢືນ**

ຕະຫຼາດຫຼັກຊັບ ຕ້ອງປະກາດຜົນການສອບເສັງ ໃຫ້ແກ່ຜູ້ເຂົ້າຮ່ວມຝຶກອົບຮົມໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ. ຕະຫຼາດຫຼັກຊັບ ສາມາດຈັດພິທີມອບຮັບໃບຢັ້ງຢືນ ໃຫ້ແກ່ ຜູ້ເສັງຜ່ານ ແລະ ຜູ້ເຂົ້າຮ່ວມຝຶກອົບຮົມ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບຕາມຄວາມເໝາະສົມ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນສໍາເລັດຜົນການສອບເສັງ ເປັນຕົ້ນໄປ.

ໃບຢັ້ງຢືນປະກອບມີ 2 ປະເພດຄື: ໃບຢັ້ງຢືນການສອບເສັງຜ່ານ (ກໍລະນີຜູ້ສອບເສັງໄດ້ຄະແນນຕາມເກນ) ແລະ ໃບຢັ້ງຢືນການເຂົ້າຮ່ວມຝຶກອົບຮົມ (ກໍລະນີຜູ້ສອບເສັງບໍ່ໄດ້ຄະແນນຕາມເກນ).

**ມາດຕາ 18 ການລາຍງານຜົນການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຕະຫຼາດຫຼັກຊັບລາວ ຕ້ອງລາຍງານຜົນການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນສໍາເລັດການມອບໃບຢັ້ງຢືນ ເປັນຕົ້ນໄປ.

## ໝວດທີ 5
## ການໂຈະຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ, ການຖອນໃບຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຂໍ້ຫ້າມ

**ມາດຕາ 19 ການໂຈະຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຈະຖືກໂຈະ ໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ໄດ້ຮັບການຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ບົນພື້ນຖານການສະໜອງຂໍ້ມູນ ຫຼື ເອກະສານ ທີ່ບໍ່ຖືກຕ້ອງ;
2. ຖືກປະຕິບັດມາດຕະການກ່າວເຕືອນ ສອງຄັ້ງຕໍ່ເນື່ອງ ແຕ່ບໍ່ສາມາດແກ້ໄຂໄດ້;
5. ບໍ່ປະຕິບັດຕາມໂຄງຮ່າງ ແລະ ລາຍວິຊາໃນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ;
6. ກໍລະນີອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຖືກໂຈະຊົ່ວຄາວ ຕະຫຼາດຫຼັກຊັບ ຕ້ອງຮີບຮ້ອນປັບປຸງແກ້ໄຂໃຫ້ສໍາເລັດ ຕາມກໍານົດເວລາທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ກໍານົດໄວ້.

**ມາດຕາ 20 ການຖອນໃບຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ**

ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຈະຖືກຖອນໃບຮັບຮອງໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ບໍ່ສາມາດແກ້ໄຂບັນຫາຕາມສາເຫດຂອງການໂຈະ ທັນຕາມກໍານົດເວລາ ທີ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບກໍານົດ;
2. ຖືກປະຕິບັດປະຕິບັດມາດຕະການກ່າວເຕືອນ ສາມຄັ້ງຕໍ່ເນື່ອງ ແຕ່ບໍ່ສາມາດແກ້ໄຂໄດ້;

3. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 21 ການຂໍຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບຄືນໃໝ່**

ການຂໍຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບຄືນໃໝ່ ພາຍຫຼັງທີ່ຖືກຖອນໃບຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຕະຫຼາດຫຼັກຊັບ ຕ້ອງປະກອບເອກະສານຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີຕໍ່ ສຳນັກງານຄະນະກາມະການຄຸ້ມຄອງຫຼັກຊັບ ພິຈາລະນາ ພ້ອມທັງຈະຕ້ອງໄດ້ປະຕິບັດພັນທະຈ່າຍຄ່າບໍລິການໃນການຂໍຮັບຮອງຫຼັກສູດຄືນ ຈຳນວນ 5.000.000 ກີບ ຕໍ່ຫຼັກສູດ. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາການຂໍຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບຄືນໃໝ່ ພາຍໃນເວລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22 ຂໍ້ຫ້າມ.**

ຫ້າມ ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ກ່ອນຫຼັກສູດດັ່ງກ່າວໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ເອົາໃບຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ຜູ້ອື່ນນຳໃຊ້;
3. ປັບປຸງ ຫຼື ປ່ຽນແປງ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ໂດຍບໍ່ໄດ້ຮັບການອະນຸຍາດຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢູ່ໃນໄລຍະຖືກ ໂຈະຊົ່ວຄາວ ຫຼື ຖືກຖອນໃບຮັບຮອງຫຼັກສູດ;
5. ຂໍ້ຫ້າມອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມການກຳນົດໄວ້ໃນລະບຽບສະເພາະ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ ແລະ ມາດຕະການປັບໃໝ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສຳນັກງານຄະນະກຳ

ມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດຄວາມເສຍຫາຍເກີນ 1.000.000 ກີບ, ມີເຈດຕະນາໃນການລະເມີດ, ບໍ່ສະໝັກໃຈແຈ້ງ ຫຼື ລາຍງານການລະເມີດຂອງຕົນ, ບໍ່ໃຫ້ການຮ່ວມມືກ່ຽວກັບການລະເມີດຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝຈຳນວນ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ທີ່ລະເມີດຂໍ້ຫ້າມ ຕາມທີ່ລະບຸໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 30.000.000 ກີບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ພອງຈັນດາ ແສງສຸລິວົງ